*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 138-148
https://doi.org/10.69692/SUJMRD090138

# ການສຶກສາສາເຫດທີ່ພາໃຫ້ຈຳນວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງຫຼຸດລົງ. ກໍລະນີສຶກສາ: ມະຫາວິທະຍາໄລ ສຸພານຸວົງ

**ສຸລິເດດ ແກ້ວບົວລະເພັດ[1*], ແຢະລີ ຈູມໍ[2], ສີສຸລີ ພົມມະແສງ[3], ສົມເພັດ ສານ[3], ອຳພັນ ເສືອງກິນແກ້ວ[4]**

*ສຳນັກງານອະທິການບໍດີ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

# A Study of Causes Influencing a Reduction in the Number of Students Taking the Entrance Examination and Low Enrollment in Higher Education Institutions. A Case Study of Souphanouvong University

**Soulideth Keoboualaphet[1*], Yelee Choumo[2], Sisouri Phommaseng[3], Somephet San[3], Amphanh Seuangkinkeo[5]**

*President Office, Souphanouvong University*

## 1. ພາກສະເໜີ

ການສຶກສາຫາສາເຫດທີ່ພາໃຫ້ຈຳນວນນັກຮຽນສອບເສັງເຂົ້າຮຽນ ແລະ ລົງທະບຽນເຂົ້າຮຽນຢູ່ສະຖາບັນການສຶກສາຊັ້ນສູງຫຼຸດລົງແມ່ນນະໂຍບາຍໜຶ່ງທີ່ທາງກະຊວງສຶກສາທິການແລະກິລາໄດ້ໃຫ້ຄວາມສຳຄັນຫຼາຍເພື່ອສ້າງຄວາມເຂັ້ມ ແຂງໃຫ້ແກ່ວຽກງານການສຶກສາຊັ້ນສູງ,ແນໃສ່ການພັດທະນາແບບຍືນຍົງ ແລະ ຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງກາ ສຶກສາໃນທຸກລະດັບ (ກະຊວງສຶກສາທິການ ແລະ ກິລາ, 2021; UNESCO, 2016). ເນື່ອງຈາກການສຶກສາເປັນສິດທິພື້ນຖານຂອງມະນຸດ, ເປັນການລົງທຶນທີ່ດີທີ່ສຸດເພື່ອຮັບປະກັນການພັດທະນາອະນາຄົດຂອງຄົນໃນໄລຍະຍາວ ແລະ ຮັບປະກັນວ່າຈະບໍ່ມີຜູ້ໃດຖືກປະລະການຮຽນ ທີ່ເປັນຄວາມຈິງສຳລັບທຸກປະເທດແລະໃນພາກພື້ນຕ່າງໆ (UNESCO, 2018). ສິດທິໃນການສຶກສາຍັງແມ່ນໜຶ່ງໃນຄວາມສຳຄັນທີ່ກຳນົດໃນວາລະສຶກສາ 2030 ແລະ ຮັບຮອງເອົາເປົ້າໝາຍທີສີ່ວ່າດ້ວຍການພັດທະນາແບບຍືນຍົງຂອງສາກົນມີເປົ້າໝາຍແນໃສ່ເພື່ອຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບ ເຊິ່ງເປັນເງື່ອນໄຂເບື້ອງຕົ້ນສຳລັບການພັດທະນາໃນໄລຍະຍາວ (UNESCO, 2020). ຢ່າງໃດກໍ່ຕາມ, ທຸກມື້ນີ້ ມີປະຊາຊົນຫຼາຍລ້ານຄົນຖືກປະຕິເສດໃນການເຂົ້າເຖິງການສຶກສາຍ້ອນບາງປັດໄຈມາຈາກບັນຫາຂອງສັງຄົມ,ວັດທະນະທຳ ແລະ ເສດຖະກິດ (UNESCO, 2018; UNESCO, 2020) ເຊິ່ງຍັງມີເດັກນ້ອຍ, ໄວໜຸ່ມຈຳນວນ 258 ລ້ານຄົນ ບໍ່ມີໂອກາດໄດ້ເຂົ້າໂຮງຮຽນກວມເອົາ 17% ຂອງຈຳນວນຄົນທົ່ວໂລກ (UNESCO, 2020). ເປັນເວລາຫຼາຍທົດສະວັດຜ່ານມາມີຈຳນວນນັກຮຽນເຂົ້າຮຽນຢູ່ໃນສະຖາບັນການສຶກສາຊັ້ນສູງຂອງລາວໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 30,574 ຄົນ ໃນປີ 2005 ເປັນ 36,278 ຄົນ ໃນປີ 2020. ໃນຂະນະດຽວກັນນັ້ນ, ນັກສຶກສາເຂົ້າຮຽນຢູ່ ມະຫາວິທະຍາໄລ ສຸພານຸວົງ ກໍໄດ້ເພີ່ມຂຶ້ນຈາກ 2,042 ຄົນ ໃນປີ 2005 ເປັນ 4,002 ຄົນ ໃນປີ 2011. ແນວໃດກໍຕາມ, ໂຕເລກເຂົ້າຮຽນໃນມະຫາວິທະຍາໄລ ຫຼຸດລົງ ມາເປັນ 3,128 ຄົນ ໃນປີ 2020 (ກະຊວງສຶກສາທິການແລະ ກິລາ, 2021) ແລະ ອີງຕາມບົດລາຍງານຫຼ້າສຸດໂດຍມະຫາວິທະຍາໄລສຸພານຸວົງ (2020) ພົບວ່າຈຳນວນນັກຮຽນມາເສັງເຂົ້າຮຽນໃນມະຫາວິທະຍາໄລ ສຸພານຸວົງ ມີທ່າອ່ຽງຫຼຸດລົງ ຈາກ 4,159 ຄົນໃນປີ 2016ຫຼຸດລົງມາເປັນ1,710 ຄົນໃນປີ 2020. ນອກຈາກນັ້ນ, ນັກສຶກສາລົງທະບຽນເຂົ້າຮຽນ ກໍ່ໄດ້ຫຼຸດລົງ ຕາມໂກຕ້າຮັບນັກສຶກສາ ໃນປີ 2016 ຈຳນວນ 1,002 ຄົນ, ມີພຽງແຕ່ 955 ຄົນມາລົງທະບຽນຮຽນ ເທົ່າກັບ 95.30%. ແຕ່ໃນປີ 2020 ມີຈຳນວນນັກຮຽນທີ່ບໍ່ມາລົງທະບຽນເຂົ້າຮຽນ ໄດ້ຫຼຸດລົງຢ່າງຫຼວງຫຼາຍ, ຕາມແຜນປີ 2020 ຮັບນັກສຶກສາ ຈຳນວນ 1,508 ຄົນ, ມີພຽງ 864 ຄົນ ມາລົງທະບຽນເທົ່າກັບ 57.20% (ມະຫາວິທະຍາໄລສຸພານຸວົງ, 2021). ຄຽງຄູ່ກັນນັ້ນ, ກໍ່ໄດ້ໂຈະການຮັບນັກຮຽນເຂົ້າຮຽນໃນ 4 ຫຼັກສູດຄື: ຫຼັກສູດສາຂາຄູເຄມີ, ຄູຟີຊິກສາດ, ພາສາລາວວັນນະຄະດີ ແລະ ສາຂາວິທະຍາສາດການປູກພືດ (ມະຫາວິທະຍາໄລ ສຸພານຸວົງ, 2021). ເຫັນວ່າ ຈຳນວນນັກຮຽນມາສອບເສັງເຂົ້າຮຽນ ແລະລົງທະບຽນເຂົ້າຮຽນຢູ່ມະຫາວິທະຍາໄລສຸພານຸວົງຫຼຸດລົງ. ຜົນການສຶກສາຄົ້ນຄວ້າຈຳ

ນອນໜຶ່ງໄດ້ຊີ້ໃຫ້ເຫັນບາງຫາສາເຫດເປັນຫຍັງນັກຮຽນບໍ່ລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລ, ເປັນຕົ້ນນັກສຶກສາອິນເດຍ ແລະ ຈີນໄດ້ອອກໄປສຶກສາຕໍ່ຢູ່ຕ່າງປະເທດເນື່ອງຈາກວ່າຈະມີປະສົບການກ່ຽວກັບຕ່າງປະເທດຫຼາຍກວ່າການຮຽນຢູ່ພາຍໃນປະເທດ (Bhati, Lee & Kairon, 2014); ມີບາງສາເຫດຍ້ອນມີການແຂ່ງຂັນກັນສູງຂອງບັນດາສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ, ມີຜົນກະທົບຈາກວິກິດທາງດ້ານເສດຖະກິດຂອງປະເທດ,ມີລະດັບຄວາມນິຍົມຮຽນໃນປະເທດຫຼຸດລົງແລະສາເຫດອື່ນໆທີ່ສົ່ງຜົນຕໍ່ການລົງທະບຽນເຂົ້າຮຽນຫຼຸດລົງ (Krotova&Krotov, 2018). ພ້ອມດຽວກັນນັ້ນ, ນັກຮຽນບໍ່ມາລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລຍ້ອນສະພາບການປ່ຽນທາງດ້ານເສດຖະກິດ-ສັງຄົມ, ມີນັກຮຽນໄດ້ຕັດສິນໃຈເລືອກເຂົ້າຮຽນດ້ວຍຕົນເອງເປັນສ່ວນໃຫຍ່ເປັນຕົ້ນເຂົ້າຫຼັກສູດສາຍສັງຄົມ,ໃນນີ້ໂອກາດການເຂົ້າເຮັດວຽກງານຫຼັງຮຽນຈົບ, ເພດ ແລະ ປັດໄຈສິ່ງແວດລ້ອມອ້ອມຍັງມີຜົນຕໍ່ການເຂົ້າຮຽນໃນມະຫາວິທະຍາໄລ (Odia, 2014). ນອກຈາກນັ້ນ, ໜຶ່ງໃນຮູບແບບການແນະນຳການເວົ້າແບບປາກຕໍ່ປາກທີ່ແນະນຳເຖິງປະສິດທິພາບຂອງຜູ້ທີ່ຮຽນຈົບມາເຮັດວຽກ, ລວມທັງຄຳແນະນຳຈາກໝູ່ເພື່ອນ ແລະ ຄອບຄົວແມ່ນມີຜົນຕໍ່ການຕັດສິນໃຈຂອງນັກຮຽນລົງທະບຽນເຂົ້າຮຽນມະຫາວິທະຍາໄລໃນອະນາຄົດ, ຈາກຜົນການສຳຫຼວດ 40% ແມ່ນນັກສຶກສາລະດັບປະລິນຍາຕີແລະປະລິນຍາໂທ ໄດ້ສຶກສາຮຽນຮູ້ກ່ຽວກັບການເຂົ້າຮຽນໃນມະຫາວິທະຍາໄລດ້ວຍຕົນເອງ. ເມື່ອສົມທຽບແລ້ວ, ການແນະນຳແບບຄຳເວົ້າຈາກປາກ ແລະ ຄຳແນະນຳຂອງໝູ່ເພື່ອນ ສົ່ງຜົນຕໍ່ການຕັດສິນໃຈຂອງນັກຮຽນເຂົ້າຮຽນໃນມະຫາວິທະຍາໄລໃດນຶ່ງ (Spearman, Rahim, Ghanayem & Ljepava, 2016). ສະພາບແວດລ້ອມຂອງສັງຄົມ, ຮີດຄອງປະເພນີ ແລະການໃຫ້ຄຸນຄ່າການສຶກສາ ຍັງເປັນຂໍ້ຈຳກັດຄວາມສາມາດຂອງເດັກຍິງ ໃນການເຂົ້າໂຮງຮຽນ ຫຼື ສຶກສາຕໍ່ໃນສະຖາບັນການສຶກສາຊັ້ນສູງ, ການສຶກສາໂດຍ Sadima (2004) ໄດ້ອ້າງວ່າການໃຫ້ຄວາມສຳຄັນຂອງການສຶກສາຈາກພໍ່ແມ່ຄອບຄົວມີອິດທິພົນໃຫ້ລູກຫຼານຕົນໄປລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລ ຫຼື ໂຮງຮຽນໃດທີ່ເໝາະສົມ ເນື່ອງຈາກວ່າ ມີນັກຮຽນມັດທະຍົມປາຍຫຼາຍຄົນຫຼື ນັກສຶກສາທີ່ຮຽນຈົບມາຍັງມີອັດຕາຫວ້າງງານຫຼາຍ ແລະ ບໍ່ສາມາດຊອກວຽກເຮັດງານທຳໄດ້.

ການຄົ້ນຄວ້າ ຄັ້ງນີ້ ແມ່ນ ສຶກສາຫາສາເຫດທີ່ພາໃຫ້ຈຳນວນນັກຮຽນມາສອບເສັງ ແລະ ລົງທະບຽນ ເຂົ້າຮຽນຢູ່ ມະຫາວິ ທະຍາໄລສຸພານຸວົງ ຫຼຸດລົງ, ເຊິ່ງມີຈຸດປະສົງ ຄື: 1) ສຶກສານັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມະຫາວິທະຍາໄລ ສຸພານຸວົງ ຫຼຸດລົງ, 2) ສຶກສາສາເຫດທີ່ພາໃຫ້ຈຳນວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມະຫາວິທະຍາໄລ ສຸພານຸວົງ ຫຼຸດລົງ ແລະ 3) ສຶກສາຄວາມສຳພັນລະຫວ່າງສາເຫດ ກັບນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມະຫາວິ ທະຍາໄລ ສຸພານຸວົງ ຫຼຸດລົງ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ ຫຼື ກຸ່ມຕົວຢ່າງ

ກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ປະກອບມີຜູ້ບໍລິຫານການສຶກສາ ແລະ ກິລາແຂວງໃນເຂດພາກເໜືອຂອງລາວ, ອາດິດນັກຮຽນ ແລະ ນັກຮຽນ ມ7 ທີ່ກຳລັງຮຽນຢູ່ ຈຳນວນ 750 ຄົນ. ເຕັກນິກການຄັດເລືອກກຸ່ມຕົວຢ່າງ ປະກອບມີສອງປະເພດຄື: ການຄັດເລືອກກຸ່ມຕົວຢ່າງສຳລັບການວິໄຈແບບປະລິມານ ແມ່ນຈະໃຊ້ເຕັກນິກການສຸ່ມແບບງ່າຍ, ກຸ່ມຍ່ອຍຂອງປະຊາກອນທາງສະຖິຕິເຊິ່ງແຕ່ລະສະມາຊິກຂອງກຸ່ມຍ່ອຍມີຄວາມເປັນໄປໄດ້ເທົ່າກັນທີ່ຈະຖືກເລືອກເຂົ້າຮ່ວມໃນການຄົ້ນຄວ້າວິໄຈ.ຕົວຢ່າງສຸ່ມແບບງ່າຍນີ້ ໝາຍເຖິງເປັນຕົວແທນທີ່ບໍ່ລຳອຽງຂອງກຸ່ມ ( Adam Hayes, 2021; Fraenkel & Wallen, 2009; Creswell, 2012).

### 2.2 ເຄື່ອງມືຂອງການຄົ້ນຄວ້າ

ເຄື່ອງມືນຳໃຊ້ໃນການເກັບກຳຂໍ້ມູນຄັ້ງນີ້ ປະກອບມີ 2 ປະເພດ ຄື: ແບບສອບຖາມ ແລະ ແບບສຳພາດ. ແບບສອບຖາມລວມມີ 3 ພາກ ເຊັ່ນ: ພາກຂໍ້ມູນສ່ວນຕົວ, ເນື້ອໃນ ແລະ ຄຳຖາມປາຍເປີດ. ແບບສອບຖາມ ຈັດອອກເປັນຫ້າລະດັບ ຄື: ເຫັນດີທີ່ສຸດ (Strongly agree), ເຫັນດີ (Agree), ປານກາງ (Neutral), ບໍ່ເຫັນດີ (Disagree) ບໍ່ເຫັນດີທີ່ສຸດ (Strongly disagree). ແບບສຳພາດນຳໃຊ້ຮູບແບບທີ່ບໍ່ມີໂຄງສ້າງ (Non-Structured Interview). ການສຳພາດຮູບແບບບໍ່ມີໂຄງສ້າງແມ່ນການສຳພາດປະເພດໜຶ່ງ ທີ່ຜູ້ສຳພາດຕັ້ງຄຳຖາມທີ່ໄດ້ກຳນົດໄວ້ລ່ວງໜ້າຈຳນວນໜຶ່ງ.

### 2.3 ການຫາຄຸນນະພາບຂອງເຄື່ອງມື (ຖ້າມີ)

ແບບສອບຖາມດັ່ງກ່າວໄດ້ຮັບການພັດທະນາ ດ້ວຍທີມ

ງານນັກຄົ້ນຄວ້າ ເຊິ່ງໄດ້ຜ່ານການກວດສອບໂດຍຜູ້ຊ່ຽວ ຊານໃນສາຂາວິຊານັ້ນ ເພື່ອກວດສອບຄວາມຖືກຕ້ອງ ແລະ ຄວາມໜ້າເຊື່ອຖືຂອງເຄື່ອງມື. ຫຼັງຈາກນັ້ນ, ແບບສອບຖາມຈະຖືກນຳໄປທົດລອງກັບນັກສຶກສາ ຈຳນວນ 15 ຄົນ ໃນມະຫາວິທະຍາໄລສຸພານຸວົງ ເພື່ອຫາຄວາມທ່ຽງຕົງ ແລະ ຖືກຕ້ອງຂອງແບບສອບຖາມ ກ່ອນນຳໄປໃຊ້ກັບກຸ່ມເປົ້າໝາຍໃນການຄົ້ນຄວ້າວິໄຈ. ການຊອກຫາຄວາມຖືກຕ້ອງ ແລະ ຄວາມທ່ຽງຕົງຂອງເຄື່ອງມືໂດຍນຳໃຊ້ຄ່າ IOC (Index of Item–Objective Congruence) ທີ່ພັດທະນາໂດຍ (Turner & Carlson, 2003), ຊຶ່ງແມ່ນການຊອກຫາຄ່າຄະແນນຂອງຜູ້ຕອບແບບສອບຖາມ ດັ່ງນີ້:

1. +1 ແນ່ໃຈວ່າຄຳຖາມນັ້ນມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຈຸດປະສົງທີ່ຕັ້ງໄວ້.
2. 0 ບໍ່ແນ່ໃຈວ່າຄຳຖາມນັ້ນມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຈຸດປະສົງທີ່ຕັ້ງໄວ້.
3. -1 ແນ່ໃຈວ່າຄຳຖາມນັ້ນບໍ່ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຈຸດປະສົງທີ່ຕັ້ງໄວ້.

### 2.4 ວິທີເກັບກຳຂໍ້ມູນ

ທີມງານຄົ້ນຄວ້າວິໄຈໄດ້ນຳເອົາໜັງສືສະເໜີຈາກມະຫາວິທະຍາໄລ ສຸພານຸວົງ ໄປຂໍອານຸຍາດນຳພະແນກສຶກສາທິການ ແລະ ກິລາ ແຂວງ, ບັນດາວິທະຍາໄລ, ສະຖາບັນ, ໂຮງຮຽນມັດທະຍົມຕ່າງໆພາຍໃນແຂວງຫຼວງພະບາງ ແລະ ບັນດາແຂວງພາກເໜືອ ເພື່ອຂໍອະນຸຍາດ ແລະ ຂໍຄວາມຮ່ວມມືໃນການເກັບກຳຂໍ້ມູນຈາກກຸ່ມເປົ້າໝາຍເພື່ອຮັບປະກັນວ່າກຸ່ມເປົ້າໝາຍເຂົ້າຮ່ວມໃນການຄົ້ນຄວ້າວິໄຈເຂົ້າຮ່ວມຕາມຄວາມສະມັກໃຈຂອງຕົນ ທາງທີມງານຄົ້ນຄວ້າວິໄຈ ຈະໃຫ້ຜູ້ເຂົ້າຮ່ວມວິໄຈເຊັນໃບຍິນຍອມ (Consent form) ແລະ ຮັບປະກັນວ່າ ຂໍ້ມູນລັບ, ຄວາມເປັນສ່ວນຕົວ ແລະ ຊື່ແມ່ນຈະໄດ້ເກັບໄວ້ເປັນຄວາມລັບ. ຫຼັງຈາກນັ້ນທາງທີມງານຄົ້ນຄວ້າວິໄຈຈະກ່າວຈຸດປະສົງຂອງການຄົ້ນຄວ້າວິໄຈຄັ້ງນີ້ ແລະ ອະທິບາຍວິທີການຕອບແບບສອບຖາມ , ຫຼັງຈາກນັ້ນ ຈະຢາຍແບບສອບຖາມໃຫ້ກຸ່ມເປົ້າໝາຍຕອບແບບສອບຖາມ ຊຶ່ງຈະໃຊ້ເວລາປະມານ 60 ນາທີ ໃນການຕອບ ແລະ ເກັບແບບສອບຖາມຄືນ.

### 2.5 ວິທີວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນໄດ້ໃຊ້ສອງວິທີການ ຄື ການວິເຄາະຂໍ້ມູນທາງດ້ານປະລິມານແມ່ນ ສ້າງປຶ້ມລົງລະຫັດຂໍ້ມູນ (Code book) ໂດຍການຈັດ ແລະ ໃຫ້ລະຫັດຂໍ້ມູນຕົວປ່ຽນທຸກໂຕ ເພື່ອກະກຽມລົງລະຫັດໃນ SPSS version 25 ເພື່ອກຽມວິເຄາະແມ່ນການປ້ອນຂໍ້ມູນຈາກປຶ້ມລົງລະຫັດເຂົ້າໄປໃນໂປຣແກມຄອມພິວເຕີການປ້ອນຂໍ້ມູນເກີດຂຶ້ນເມື່ອນັກຄົ້ນຄວ້າໂອນຂໍ້ມູນຈາກຄຳຕອບຢູ່ໃນເຄື່ອງມືໄປສູ່ຄອມພິວເຕີສຳລັບການວິເຄາະ. ກວດສອບຄືນຂໍ້ມູນ ຫຼື ຕົວປ່ຽນທຸກໂຕທີ່ລົງລະຫັດໃນ SPSS ເພື່ອກວດສອບຄວາມຖືກຕ້ອງຂໍ້ມູນວ່າ ມີອັນຜິດພາດ ຫຼື ຂາດຫາຍໄປ. ຫຼັງຈາກນັ້ນ ວິເຄາະຂໍ້ມູນໃນຮູບແບບສະຖິຕິພັນລະນາ ແລະ ອະທິບາຍຜົນການຄົ້ນຄວ້າວິໄຈ ສະແດງໃນຮູບຕາຕະລາງ ແລະ ແຜນວາດ. ສຳລັບການວິເຄາະແບບຄຸນນະພາບແມ່ນໄດ້ຈັດລະບົບຂໍ້ມູນເຂົ້າໃນແຟ້ມເອກະສານຫຼືຄອມພິວເຕີ. ການຈັດລະບົບຂໍ້ມູນແມ່ນມີຄວາມສຳຄັນຫຼາຍ ໃນການຄົ້ນຄ້ວາດ້ານຄຸນນະພາບເນື່ອງຈາກມີການເກັບກຳຂໍ້ມູນຈຳນວນຫຼາຍໃນລະຫວ່າງການສຶກສາ. ຖອດຂໍ້ຄວາມຈາກຂໍ້ມູນ ແມ່ນເປັນຂັ້ນຕອນຂອງການຖອດຂໍ້ຄວາມຈາກການບັນທຶກສຽງ ຫຼື ສຽງບັນທຶກເຂົ້າໄປໃນຂໍ້ມູນ. ການວິເຄາະຂໍ້ມູນດ້ານຄຸນນະພາບດ້ວຍມືໝາຍເຖິງນັກຄົ້ນຄວ້າອ່ານຂໍ້ມູນ, ໃສ່ລະຫັດເຄື່ອງໝາຍດ້ວຍມື ແລະ ແບ່ງຂໍ້ມູນອອກເປັນບາງສ່ວນຕາມກຸ່ມຂອງມັນ.

## 3. ຜົນໄດ້ຮັບ

### 3.1 ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມະຫາວິທະຍາໄລ ສຸພານຸວົງ ຫຼຸດລົງ

ໂດຍພາບລວມນັກຮຽນມາສອບເສັງເຂົ້າຮຽນຢູ່ ມະຫາວິທະຍາໄລ ສຸພານຸວົງ ຫຼຸດລົງ ຢູ່ໃນລະດັບປານກາງ ($\overline{X}$ =3.32, SD=0.57) ເມື່ອພິຈາລະນາເປັນຂໍ້ ພົບວ່າ ມີ 2 ຂໍ້ຢູ່ໃນລະດັບຫຼາຍ ຄື: ຫຍຸ້ງຍາກໃນການເດີນທາງ, ພັກເຊົາ ແລະ ມີຄ່າໃຊ້ຈ່າຍສູງມາສອບເສັງ ($\overline{X}$ =3.66, SD=1.09), ມີທາງເລືອກຮຽນບ່ອນອື່ນ ($\overline{X}$ = 3.61, SD=1.19) ແລະ ສ່ວນຂໍ້ອື່ນໆແມ່ນຢູ່ໃນລະດັບປານກາງ.

ໂດຍພາບລວມນັກຮຽນມາລົງທະບຽນເຂົ້າຮຽນ ຢູ່ ມະຫາວິທະຍາໄລ ສຸພານຸວົງ ຫຼຸດລົງ ມີຄ່າສະເລ່ຍຢູ່ໃນລະດັບປານກາງ ($\overline{X}$ =3.35, SD=0.75) ເມື່ອພິຈາລະນາເປັນຂໍ້ ພົບວ່າ ມີ 2 ຂໍ້ຢູ່ໃນລະດັບຫຼາຍ ຄື: ຢາກຮຽນໃນສາຂາຮຽນທີ່ຕົນມັກແຕ່ໂກຕ້າຮັບມີຈຳນວນຈຳກັດ ($\overline{X}$ =3.16, SD=1.16), ເສັງໄດ້ແຕ່ບໍ່ສາມາດໃຊ້ຈ່າຍຕ່າງໆ, ເຊັ່ນ: ຄ່າລົງທະບຽນໃນໄລຍະຮຽນ,

ຄ່າທີ່ພັກ, ແລະ ຄ່າອື່ນໆ. ($\overline{X}$ = 3.69, SD=1.13) ແລະ ສ່ວນຂໍ້ອື່ນໆ ແມ່ນຢູ່ໃນລະດັບປານກາງ.

### 3.2 ສາເຫດທີ່ພາໃຫ້ຈຳນວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມສ ຫຼວງພະບາງ (ຫຼັງລິງ)

ຈາກການຄົ້ນຄວ້າພົບວ່າ ໂດຍພາບລວມແລ້ວທຸກສາເຫດມີຄ່າສະເລ່ຍຢູ່ໃນລະດັບປານກາງ ($\overline{X}$ =3.33, SD=0.52), ເມື່ອພິຈາລະນາ ພົບວ່າ ມີ 2 ສາເຫດ ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ຄື: ສາເຫດທີ່ກ່ຽວກັບສັງຄົມ ($\overline{X}$ =3.75, SD=0.72), ເສດຖະກິດ ($\overline{X}$ =3.72, SD=0.85) ຕາມລຳດັບ ແລະ ສ່ວນສາເຫດອື່ນໆແມ່ນຢູ່ໃນລະດັບປານກາງ ຄື: ສາເຫດທີ່ກ່ຽວກັບການເລືອກຮຽນໃນວິຊາຊີບ ($\overline{X}$ =3.32, SD=0.67), ຕົວນັກຮຽນ ($\overline{X}$ =3.32, SD= 0.71), ສາເຫດທີ່ກ່ຽວກັບຄອບຄົວ ($\overline{X}$ = 3.03, SD=0.77) ແລະ ມະຫາວິທະຍາໄລ ($\overline{X}$ =2.86, SD= 0.75).

ຈາກການຄົ້ນຄວ້າພົບວ່າ ໂດຍພາບລວມ ສາເຫດທີ່ກ່ຽວກັບມະຫາວິທະຍາໄລ ມີຄ່າສະເລ່ຍຢູ່ໃນລະດັບປານກາງ ($\overline{X}$ 2.86, SD=0.75) ເມື່ອພິຈາລະນາເປັນຂໍ້ ພົບວ່າ ທຸກຂໍ້ມີຄ່າສະເລ່ຍຢູ່ໃນລະດັບປານກາງໝົດທຸກຂໍ້ ແຕ່ຂໍ້ທີ່ມີຄ່າສະເລ່ຍສູງສຸດ ຄື: ການເຜີຍແຜ່ຫຼັກສູດ ແລະ ຂໍ້ມູນຂ່າວສານຕ່າງໆຂອງມະຫາ ວິທະຍາໄລ ຍັງບໍ່ທົ່ວເຖິງ ($\overline{X}$ 3.13, SD=1.10) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດ ຄື: ຊື່ສຽງມະຫາວິທະຍາໄລຍັງບໍ່ເປັນທີ່ຍອມຮັບສັງຄົມ ($\overline{X}$ 2.51, SD=1.19). ສະແດງວ່າ ສາເຫດທີ່ກ່ຽວກັບມະຫາວິທະຍາໄລສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ມະຫາວິທະຍາໄລ ສຸພານຸວົງ ຫຼວງພະບາງ (ຫຼັງລິງ) ຢູ່ໃນລະດັບປານກາງ.

ຈາກການຄົ້ນຄວ້າພົບວ່າ ໂດຍພາບລວມ ສາເຫດທີ່ກ່ຽວກັບສັງຄົມ ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ($\overline{X}$ =3.75, SD=0.72) ເມື່ອພິຈາລະນາເປັນຂໍ້ພົບວ່າ ທຸກຂໍ້ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ໂດຍລຽງຈາກຄ່າສະເລ່ຍຫຼາຍໄປຫານ້ອຍ ຄື: ຮຽນຈົບແລ້ວບໍ່ໄດ້ເຮັດວຽກນຳພາກລັດ ($\overline{X}$ =3.91, SD= 1.16), ຈຳນວນຜູ້ຮຽນຈົບມີປະລິມານຫຼາຍແຕ່ ຕະຫຼາດແຮງງານທີ່ຕ້ອງການຮັບມີຈຳນວນຈຳກັດ ($\overline{X}$ =3.88, SD=1.05), ຜູ້ຮຽນຈົບຈາກມະຫາວິທະຍາໄລມີອັດຕາການຫວ່າງງານສູງ ($\overline{X}$ =3.86, SD=1.09), ມີການແຂ່ງຂັນສູງຈາກສະຖາບັນການສຶກສາພາຍໃນ ແລະ ຕ່າງປະເທດ ເພື່ອດຶງດູດນັກຮຽນໄປຮຽນ ($\overline{X}$ =3.65, SD=1.08), ຮຽນຈົບແລ້ວ ແຕ່ເຮັດວຽກບໍ່ໄດ້ຕາມວິຊາສະເພາະທີ່ຮຽນມາ ($\overline{X}$ =3.64, SD=1.08), ແລະ ນິຍົມຮຽນຕ່າງປະເທດ ເຊັ່ນ: ຈີນ, ຫວຽດນາມ ແລະ ອື່ນໆ ເນື່ອງຈາກວ່າຄ່າໃຊ້ຈ່າຍຖືກກວ່າ ແລະ ຊອກວຽກໄດ້ງ່າຍຫຼັງຈາກຮຽນຈົບ ($\overline{X}$ =3.56, SD=1.19).

ຈາກການຄົ້ນຄວ້າພົບວ່າ ໂດຍພາບລວມສາເຫດທີ່ກ່ຽວກັບເສດຖະກິດ ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ($\overline{X}$ =3.72, SD=0.85) ເມື່ອພິຈາລະນາເປັນຂໍ້ພົບວ່າ ທຸກຂໍ້ຢູ່ໃນລະດັບຫຼາຍ ໂດຍລຽງຈາກຄ່າສະເລ່ຍຫຼາຍໄປຫານ້ອຍ ຄື: ຄ່າຄອງຊີບສູງ ແລະ ການໃຊ້ຈ່າຍຫຼາຍໃນສັງຄົມ ($\overline{X}$ =3.83, SD=1.03), ບໍ່ມີກອງທຶນສະໜັບສະໜູນການສຶກສາຕໍ່ຜູ້ດ້ອຍໂອກາດ ($\overline{X}$ =3.72, SD=1.17), ເສດຖະກິດບໍ່ໝັ້ນທ່ຽງມີອັດຕາເງິນເຟີ້ສູງ ($\overline{X}$ =3.72, SD=1.20), ແລະ ລົງທຶນໃສ່ການຮຽນສູງ ເມື່ອຮຽນຈົບມາ ບໍ່ສາມາດຄືນທຶນໄດ້ ($\overline{X}$ =3.62, SD= 1.11).

ຈາກການຄົ້ນຄວ້າພົບວ່າ ໂດຍພາບລວມສາເຫດທີ່ກ່ຽວກັບຄອບຄົວມີຄ່າສະເລ່ຍຢູ່ໃນລະດັບປານກາງ ($\overline{X}$ =3.03, SD=0.77) ເມື່ອພິຈາລະນາເປັນຂໍ້ພົບວ່າ ມີ 2 ຂໍ້ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ຄື: ພໍ່ແມ່ ທຸກຍາກ ບໍ່ສາມາດສົ່ງລູກຮຽນ ($\overline{X}$ =3.61, SD=1.26), ຮອງລົງມາແມ່ນລາຍຮັບຂອງຄອບຄົວຕໍ່າອາຊີບບໍ່ໝັ້ນຄົງ ($\overline{X}$ =3.57, SD=1.19) ແລະ ສ່ວນຂໍ້ທີ່ມີຄ່າສະເລ່ຍຢູ່ໃນລະດັບນ້ອຍຄື: ພໍ່ແມ່ໃຫ້ຄວາມສຳຄັນການສຶກສາຂອງລູກຊາຍຫຼາຍກວ່າລູກສາວ ($\overline{X}$ =2.49, SD=1.24).

ຈາກການສຶກສາພົບວ່າ ໂດຍພາບລວມ ສາເຫດທີ່ກ່ຽວກັບການເລືອກຮຽນໃນວິຊາຊີບມີຄ່າສະເລ່ຍຢູ່ໃນລະດັບປານກາງ ($\overline{X}$ =3.32, SD=0.67) ເມື່ອພິຈາລະນາເປັນຂໍ້ພົບວ່າທຸກຂໍ້ມີຄ່າສະເລ່ຍຢູ່ໃນລະດັບປານກາງໂດຍຂໍ້ທີ່ມີຄ່າສະເລ່ຍສູງສຸດ ຄື: ຮຽນວິຊາຊີບສອດຄ່ອງກັບຄວາມຕ້ອງການຕະຫຼາດແຮງງານສາມາດຊອກເຮັດວຽກໄດ້ງ່າຍ ($\overline{X}$ =3.48, SD=0.99) ແລະ ຄ່າສະເລ່ຍ ຕໍ່າສຸດ ຄື: ຮຽນວິຊາຊີບມີຄຸນນະພາບສູງກວ່າມະຫາວິທະຍາໄລ ($\overline{X}$ =3.10, SD=1.03).

ຈາກການສຶກສາພົບວ່າ ໂດຍພາບລວມສາເຫດທີ່ກ່ຽວກັບຕົວນັກຮຽນມີຄ່າສະເລ່ຍຢູ່ໃນລະດັບປານກາງ ($\overline{X}$ =3.32, SD=0.71) ເມື່ອພິຈາລະນາ ພົບວ່າມີ 2 ຂໍ້ມີຄ່າສະເລ່ຍຢູ່ໃນ

ລະດັບຫຼາຍ ຄື: ຖ້າຮຽນຈົບກໍ່ບໍ່ມີບ່ອນຮອງຮັບເຮັດວຽກນຳພາກສ່ວນຕ່າງໆ ($\overline{X}$ =3.67, SD=1.07), ຮອງລົງມາ ຄື: ປະກອບອາຊີບ ຫຼື ເຮັດທຸລະກິດອື່ນໆ ($\overline{X}$ =3.52, SD=1.10) ແລະສ່ວນຂໍ້ທີ່ເຫຼືອແມ່ນຢູ່ໃນລະດັບປານກາງ.

### 3.3 ຄວາມສຳພັນລະຫວ່າງສາເຫດກັບນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼູດລົງ

ຈາກການສຶກສາພົບວ່າ ສາເຫດທີ່ມີລະດັບຄວາມສຳຄັນຕໍ່ນັກຮຽນມາສອບເສັງ ຢູ່ ມສ ຫຼູດລົງ ທີ່ສາມາດອະທິບາຍຄວາມແຕກຕ່າງຂອງນັກຮຽນມາສອບເສັງ ຢູ່ ມສ ມີ 4 ສາເຫດ ຄື: ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ເສດຖະກິດ, ການເລືອກຮຽນໃນວິຊາຊີບ ແລະ ຕົວນັກຮຽນຮ່ວມກັນພະຍາກອນພາບລວມຂອງນັກຮຽນມາສອບເສັງເຂົ້າຮຽນຢູ່ ມສ ຫຼູດລົງ ໄດ້ 25.40% ($R^2$=0.254) ມີລະດັບຄວາມສຳຄັນທາງສະຖິຕິ 0.05 ໂດຍມີຕົວພະຍາກອນທີ່ສຳຄັນຫຼາຍຫານ້ອຍ ຄື: ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ການເລືອກຮຽນໃນວິຊາຊີບ, ເສດຖະກິດ ແລະ ຕົວນັກຮຽນ ມີຄ່າເບຕາ (b) ເທົ່າກັບ 0.196, 0.137, 0.129 ແລະ 0.074 ຕາມລຳດັບ.

ຜົນການວິເຄາະດັ່ງກ່າວ ສາມາດຂຽນເປັນສົມຜົນການພະຍາກອນນັກຮຽນມາສອບເສັງເຂົ້າຮຽນຢູ່ ມສ ຫຼູດລົງ ດັ່ງລຸ່ມນີ້: $Y_1 = 1.577 + 0.196\,(X_1) + 0.137\,(X_5) + 0.129\,(X_3) + 0.074\,(X_5)$.

ຈາກການສຶກສາພົບວ່າ ສາເຫດທີ່ມີລະດັບຄວາມສຳຄັນຕໍ່ນັກຮຽນລົງທະບຽນເຂົ້າຮຽນຢູ່ ມສ ຫຼູດລົງ ທີ່ສາມາດອະທິບາຍຄວາມແຕກຕ່າງຂອງນັກຮຽນລົງທະບຽນເຂົ້າຮຽນຢູ່ ມສ ມີ 5 ສາເຫດ ຄື: ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ສັງຄົມ, ເສດຖະກິດ, ຄອບຄົວ ແລະ ຕົວນັກຮຽນຮ່ວມກັນພະຍາກອນພາບລວມຂອງຕົວປ່ຽນຕາມ ຄື ນັກຮຽນລົງທະບຽນເຂົ້າຮຽນຢູ່ ມສ ຫຼູດລົງ ໄດ້ 38.70% ($R^2$=0.387) ມີລະດັບຄວາມສຳຄັນທາງສະຖິຕິ 0.01 ໂດຍມີຕົວພະຍາກອນທີ່ສຳຄັນຫຼາຍທີ່ສຸດຫານ້ອຍທີ່ສຸດ ຄື: ສາເຫດທີ່ກ່ຽວກັບສັງຄົມ, ຄອບຄົວ, ມະຫາວິທະຍາໄລ, ຕົວນັກຮຽນ ແລະ ເສດຖະກິດ ມີຄ່າເບຕາ (b) ເທົ່າກັບ 0.332, 0.166, 0.135, 0.114 ແລະ 0.093 ຕາມລຳດັບ.

ຜົນການວິເຄາະດັ່ງກ່າວ ສາມາດຂຽນເປັນສົມຜົນການພະຍາກອນນັກຮຽນມາສອບເສັງເຂົ້າຮຽນຢູ່ ມສ ຫຼູດລົງ ດັ່ງລຸ່ມນີ້: $Y_2 = 0.485 + 0.332(X_2) + 0.166(X_4) + 0.135(X_1) + 0.114(X_6) + 0.093(X_3)$.

## 4. ວິພາກຜົນ

ນັກຮຽນມາສອບເສັງເຂົ້າຮຽນ ຢູ່ ມສ ຫຼູດລົງ ແມ່ນຢູ່ໃນລະດັບປານກາງ. ແຕ່ໃນນັ້ນ, ຄວາມຫຍຸ້ງຍາກໃນການເດີນທາງ, ພັກເຊົາ ແລະ ມີຄ່າໃຊ້ຈ່າຍສູງມາສອບເສັງ ແລະ ມີທາງເລືອກຮຽນບ່ອນອື່ນ ແມ່ນຢູ່ໃນລະດັບຫຼາຍ; ສ່ວນສູນສອບເສັງຢູ່ຫ່າງໄກ ແລະ ຕັ້ງຢູ່ຈຸດສູນດຽວ, ການແຈ້ງຂໍ້ມູນການສອບເສັງເຂົ້າຮຽນບໍ່ທົ່ວເຖິງກັນ, ການສະໝັກສອບເສັງເຂົ້າຮຽນຜ່ານຫຼາຍຂັ້ນຕອນ, ໂອກາດການຄັດເລືອກເຂົ້າຮຽນມີເປີເຊັນໄດ້ຕ່ຳ ແລະ ການແຈ້ງຜົນສອບເສັງອອກຊ້າເກີນໄປ ແມ່ນຢູ່ໃນລະດັບກາງ. ຜົນການຄົ້ນຄວ້ານີ້ຄ້າຍຄືກັບການຄົ້ນຄວ້າໂດຍ Mishra ແລະ Gupta (2021) ລະບຸວ່າ ນັກຮຽນເລືອກຮຽນ ແມ່ນພິຈາລະນາເບິ່ງຄ່າໃຊ້ຈ່າຍຕ່າງໆ ເຊັ່ນ: ຄ່າລົງທະບຽນຮຽນ, ຄ່າພັກເຊົາ ແລະ ຄ່າເດີນທາງ. ເມື່ອສະຖາບັນການສຶກສາຢູ່ຫ່າງໄກ, ມີຄ່າໃຊ້ຈ່າຍສູງ ນັກຮຽນຈະພິຈາລະນາການມາສອບເສັງເຂົ້າຮຽນ ແລະ ເສດຖະກິດ.ຄອບຄົວ ເປັນພື້ນຖານ ທີ່ສົ່ງຜົນຕໍ່ການຊຸກຍູ້ໃຫ້ລູກຂອງເຂົາເຈົ້າເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງ (Maniu & Maniu, 2014). ສ່ວນສອບເສັງໄດ້ຫຼາຍບ່ອນເລີຍເລືອກຮຽນບ່ອນອື່ນທີ່ມີຊື່ສຽງກວ່າ, ເສັງໄດ້ຮັບທຶນຊັບຊ້ອນໄປຮຽນຢູ່ສະຖາບັນອື່ນ, ໄດ້ໂກຕ້າໃນແຜນແຕ່ບໍ່ຖືກສາຍຮຽນທີ່ຕົນເອງມັກຈຶ່ງບໍ່ມາຮຽນ, ເສັງບໍ່ໄດ້ຕາມສາຍ ຫຼື ສາຂາຮຽນທີ່ຕ້ອງການ ແລະ ຖືກຄັດເລືອກແຕ່ແມ່ນສາຂາຮຽນທີ່ບໍ່ມັກ ແມ່ນຢູ່ໃນລະ ດັບກາງ. ສອດຄ່ອງກັບການຄົ້ນຄວ້າໂດຍ Mishra ແລະ Gupta (2021) ພົບວ່າ ນັກຮຽນພິຈາລະນາຄ່າໃຊ້ຈ່າຍໃນຂະນະທີ່ເລືອກມະຫາວິທະຍາໄລ ແລະ ເຂົາເຈົ້າຍັງພິຈາລະນາວ່າຈະໃຊ້ເງິນຫຼາຍປານໃດໃນການສຶກສາຂອງເຂົາເຈົ້າກ່ອນຕັດສິນໃຈເຂົ້າຮຽນໃນມະຫາວິທະຍາໄລ. ຄ່າໃຊ້ຈ່າຍຕ່າງໆ: ຄ່າລົງທະບຽນຮຽນ, ຄ່າທີ່ພັກ, ຄ່າເດີນທາງ. ຊຶ່ງຄ່າດັ່ງກ່າວໄດ້ສົ່ງຜົນຕໍ່ການເລືອກ ແລະ ຕັດສິນໃຈເຂົ້າຮຽນໃນມະຫາວິທະຍາໄລ. Bhati, Le, ແລະ Kairon (2014) ໄດ້ລະບຸວ່າ ມີບາງຫາສາເຫດເປັນຫຍັງນັກ ຮຽນບໍ່ລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລ, ເປັນຕົ້ນນັກ ສຶກສາອິນເດຍ ແລະ ຈີນ ໄດ້ອອກໄປສຶກສາຕໍ່ຢູ່ຕ່າງປະເທດ ເນື່ອງຈາກວ່າຈະມີປະສົບການກ່ຽວກັບຕ່າງປະເທດຫຼາຍກວ່າການຮຽນຢູ່ພາຍໃນປະເທດ. Hemelt ແລະ Marcotte (2016) ພົບວ່າ ຜົນກະທົບຂອງຄ່າຮຽນຕໍ່ການເລືອກ

ເຂົ້າຮຽນມະຫາວິທະ ຍາໄລໃນອາເມລິກາ ເຊິ່ງໂດຍທົ່ວໄປແລ້ວການເພີ່ມຄ່າຮຽນໃນມະຫາວິທະຍາໄລເຮັດໃຫ້ນັກຮຽນມັດທະຍົມ ມີທ່າອຽງໄປຮຽນໃນສະຖາບັນການສຶກສາໃນລັດອື່ນແທນເນື່ອງຈາກຄ່າຮຽນຖືກກວ່າ.

ການຄົ້ນຄວ້າຄັ້ງນີ້ ໄດ້ຄົ້ນພົບ 6 ສາເຫດ ທີ່ພາໃຫ້ຈຳນວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມສ ຫຼູດລົງ ເປັນຕົ້ນ:

ສາເຫດທີ່ກ່ຽວກັບມະຫາວິທະຍາໄລໄດ້ສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼູດລົງຢູ່ໃນລະ ດັບປານກາງ. ຍ້ອນວ່າ ຊື່ສຽງມະຫາວິທະຍາໄລຍັງບໍ່ເປັນທີ່ຍອມ ຮັບໃນສັງຄົມສະພາບແວດລ້ອມຢູ່ພາຍໃນມະຫາວິທະຍາໄລ ຍັງບໍ່ທັນເໝາະສົມຕໍ່ການຮຽນ, ສິ່ງອຳນວຍຄວາມສະດວກຕ່າງໆເພື່ອຮັບໃຊ້ໃນການຮຽນ-ການສອນຍັງບໍ່ທັນເໝາະສົມ, ຫຼັກສູດການຮຽນ-ການສອນຍັງມີຄຸນນະພາບຕ່ຳ, ການສິດສອນຂອງຄູ-ອາຈານມີຄຸນນະພາບຕ່ຳ, ຂະບວນການເຄື່ອນໄຫວວຽກງານນອກຫຼັກສູດຍັງບໍ່ທັນສອດຄ່ອງ ສາຂາວິຊາທີ່ເປີດການຮຽນໃນມະຫາວິທະຍາໄລຍັງບໍ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ, ການເຜີຍແຜ່ຫຼັກສູດ ແລະ ຂໍ້ມູນຂ່າວສານຕ່າງໆຂອງມະຫາວິທະຍາໄລຍັງບໍ່ທັນທົ່ວເຖິງ, ຈັນຍາບັນຂອງຄູອາຈານ, ແລະ ຫໍພັກບໍ່ສະດວກບໍ່ມີສິ່ງອຳນວຍຄວາມສະດວກ. ຜົນຈາກການສຳພາດ 8 ຄົນໄດ້ຢັ້ງຢືນໄປທາງດຽວກັນວ່າ “ຄວາມໜ້າເຊື່ອຖືຂອງສັງຄົມຫຼູດລົງ, ລວມທັງສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກໃນມະຫາວິທະຍາໄລບໍ່ເປັນໜ້າດຶງດູດໃຫ້ມາຮຽນ, ພາກປະຕິບັດຕົວຈິງນັກສຶກສາໃນວິທະຍາໄລ, ໂຮງຮຽນເຕັກນິກວິຊາຊີບສາມາດນຳໃຊ້ວິຊາສະ ເພາະທີ່ຮຽນຈົບມາໄດ້ດີກວ່ານັກສຶກສາຂອງມະຫາວິທະຍາໄລ” ແລະ ຜູ້ໃຫ້ສຳພາດຈາກ 9 ຄົນ ໄດ້ອະທິບາຍວ່າ “ການປະສານງານກັບບັນດາຂະແໜງການສຶກສາຂອງແຂວງຍັງບໍ່ທັນໄດ້ດີ ແລະ ຍັງບໍ່ທັນທົ່ວເຖິ່ງ ເພື່ອແນະແນວໂຄສະນາລາຍລະອຽດຫຼັກສູນສາຊາວິຊາຮຽນ ແລະ ແຕ່ລະສາຂາຮຽນຈົບມາແລ້ວສາມາດເຮັດວຽກຫຍັງໄດ້ແດ່ ເພື່ອສ້າງສິ່ງຈູງໃຈໃຫ້ຄົນມາເຂົ້າຮຽນ”. ຜົນການຄົ້ນຄວ້າດັ່ງກ່າວຄ້າຍຄືຜົນການຄົ້ນຄວ້າໂດຍ Mishra ແລະ Gupta (2021) ໄດ້ແນະນຳວ່າ ຊື່ສຽງມະຫາວິທະຍາໄລມີຜົນຕໍ່ການຕັດສິນໃຈເຂົ້າຮຽນຂອງນັກຮຽນ, ນັກຮຽນເລືອກເຂົ້າຮຽນມະຫາວິທະຍາໄລທີ່ມີຊື່ສຽງກວ່າ, ຄຸນນະພາບຂອງຄູສອນ ເປັນອີກປັດໄຈໜຶ່ງທີ່ສຳຄັນທີ່ນັກຮຽນພິຈາລະນາໃນການເລືອກຮຽນມະຫາວິທະຍາໄລ. ພ້ອມດຽວກັນນີ້, ການຄົ້ນຄວ້າໂດຍ Pearson (2019), Odia (2014), Daily, Farewell ແລະ Kumar (2010) ພົບວ່າ ຊື່ສຽງຂອງສະຖາບັນ, ສະຖາບັນເປັນທີ່ຍອມຮັບໃນສັງຄົມ, ຄູສອນມີຄຸນນະພາບສູງ ແລະ ການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານຂອງສະຖາບັນ ເປັນປັດໃຈທີ່ສຳຄັນສຳລັບນັກຮຽນໃນການເລືອກເຂົ້າການສຶກສາ. ສະນັ້ນ,ຈະໄດ້ປັບປຸງສະພາບແວດລ້ອມມະຫາວິທະຍາໄລ, ອຳນວຍຄວາມສະດວກຮັບໃຊ້ການຮຽນ-ການສອນ,ຍົກສູງຄຸນນະພາບການສິດສອງຄູສອນສອນ,ສາມາດການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານເພື່ອຍົກສູງຊື່ສຽງມະຫາວິທະຍາໄລເປັນທີ່ຍອມຮັບໃນສັງຄົມ.

ສາເຫດທີ່ກ່ຽວກັບສັງຄົມໄດ້ສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼູດລົງ ໃນລະດັບຫຼາຍເປັນຕົ້ນ: ຮຽນຈົບຈາກມະຫາວິທະຍາໄລມີອັດຕາການຫວ່າງງານສູງ, ມີຈຳນວນຜູ້ຮຽນຈົບມີປະລິມານຫຼາຍແຕ່ຕະຫຼາດແຮງງານທີ່ຕ້ອງການຮັບມີຈຳນວນຈຳກັດ, ຮຽນຈົບແລ້ວບໍ່ໄດ້ເຮັດວຽກນຳພາກລັດ, ນິຍົມຮຽນຢູ່ຕ່າງປະເທດ ເຊັ່ນ: ຈີນ, ຫວຽດນາມ ແລະ ອື່ນໆ. ເນື່ອງຈາກວ່າ ຄ່າໃຊ້ຈ່າຍຖືກກວ່າ ແລະ ຊອກເຮັດວຽກໄດ້ງ່າຍຫຼັງຈາກຮຽນຈົບ, ຮຽນຈົບແລ້ວແຕ່ບໍ່ໄດ້ເຮັດວຽກຕາມວິຊາສະເພາະທີ່ຮຽນມາ, ມີການແຂ່ງຂັນສູງຈາກສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ ເພື່ອດຶງດູດນັກຮຽນປຮຽນຕໍ່. ຜົນຈາກການສຳພາດ 14 ຄົນ ໄດ້ໃຫ້ຄຳເຫັນສອດຄ່ອງກັນວ່າ “ຍ້ອນມີອັດຕາໄພຫວ່າງງານສູງ, ຮຽນຈົບມາແລ້ວບໍ່ມີວຽກເຮັດງານທຳ, ຈົບມາບໍ່ໄດ້ເຮັດວຽກນຳພາກລັດ ແລະ ຢາກເຮັດວຽກນຳພາກລັດຢ່າງດຽວ” ແລະ ຜູ້ສຳພາດ 11 ຄົນ ໄດ້ອະທິບາຍວ່າ “ພໍ່-ແມ່ ແລະ ຄອບຄົວ ແມ່ນສົ່ງລູກໄປຮຽນຢູ່ຕ່າງປະເທດ ເປັນຕົ້ນ ສສ.ຫວຽດນາມ ແລະ ສປ.ຈີນ ເຊິ່ງໄປໃນນາມໃຊ້ທຶນສ່ວນຕົວ, ທຶນບັນດາແຂວງມີຊາຍແດນຕິດກັນ ແລະ ບັນດາແຂວງແຮກສ່ຽວ ເນື່ອງຈາກຍາກໃຫ້ລູກຮຽນໃນສະຖາບັນທີ່ໃຫຍ່ດີກວ່າ, ຮຽນຢູ່ຕ່າງປະເທດພັດມີຄ່າໃຊ້ຈ່າຍຖືກກວ່າຮຽນຢູ່ພາຍໃນປະເທດ,ຄຸນນະພາບການຮຽນດີກວ່າ ແລະ ຮຽນເປັນພາສາຕ່າງປະເທດ”. ຜົນການສຶກສານີ້ ໄດ້ສ່ອດຄ່ອງກັບການສຶກສາຄົ້ນຄວ້າໂດຍ Pearson (2019), Odia (2014), Daily, Farewell ແລະ Kumar (2010) ພົບວ່າ ການໄດ້ຮັບວຽກເຮັດງານທຳຫຼັງຈົບປະລິນຍາຕີ ແລະ ການຊ່ວຍເຫຼືອທາງດ້ານການເງິນຕໍ່ນັກຮຽນ ເຊິ່ງເປັນປັດໄຈທີ່ສຳຄັນສຳລັບນັກຮຽນ

ໃນການເລືອກສະຖາບັນການສຶກສາ. ການສຶກສາໂດຍ Mishra ແລະ Gupta (2021) ກໍ່ພົບວ່າ ນັກຮຽນຕັດສິນໃຈເລືອກຮຽນມະຫາວິທະຍາໄລໃດໜຶ່ງ ເມື່ອຮຽນຈົບສະຖາບັນນັ້ນແລ້ວສາມາດມີວຽກເຮັດງານທຳ, ນັກສຶກສາໄດ້ຮັບການຊ່ວຍເຫລືອດ້ານທຶນຮອນ ໃນຊ່ວງຮຽນໃນມະຫາວິທະຍາໄລ ແລະ ເປັນສະຖາບັນເປັນທີ່ຍອມຮັບໃນສັງຄົມ. ນອກຈາກນີ້, ຜົນການຄົ້ນຄວ້າໂດຍ Bhati, Leeand Kairon (2014) ພົບວ່າ ນັກສຶກສາອິນເດຍ ແລະ ຈີນມີແນວໂນ້ມອອກໄປສຶກສາຕໍ່ຢູ່ຕ່າງປະເທດ ເນື່ອງຈາກວ່າ ເຂົາເຈົ້າຈະໄດ້ຮັບປະສົບການການສຶກສາຈາກຕ່າງປະເທດ. ພ້ອມນີ້, ການສຶກສາໂດຍ Krotova and Krotov (2018) ໄດ້ແນະນຳວ່າ ປັດໄຈພາຍໃນ ແລະ ພາຍນອກ ເຊັ່ນວ່າ: ການແຂ່ງຂັນສູງ ໃນການດູງດູດນັກສຶກສາ ຈາກສະຖາບັນການສຶກສາພາຍໃນ ແລະ ຕ່າງປະເທດມີຜົນຕໍ່ການລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລພາຍໃນປະເທດຫຼູດລົງ. ສັງລວມແລ້ວ, ຄຸນນະພາບການຮຽນ-ການສອນ, ຮຽນຈົບມາແລ້ວ ສາມາດປະກອບອາຊີບມີວຽກເຮັດງານທຳ, ເປັນສະຖາບັນເປັນເປັນທີ່ຍອມຮັບຂອງສັງຄົມ ເປັນສິ່ງດຶງດູດໃຫ້ນັກສຶກສາມາຮຽນຫຼາຍຂຶ້ນ ບໍ່ວ່າຈະຢູ່ພາຍໃນ ແລະ ຕ່າງປະເທດ.

ສາເຫດທີ່ກ່ຽວກັບເສດຖະກິດໄດ້ສົ່ງຜົນຕໍ່ນັກຮຽນເຂົ້າມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼຸດລົງ ຢູ່ໃນລະດັບຫຼາຍ. ເນື່ອງຈາກວ່າ ບໍ່ມີກອງທຶນສະໜັບສະໜູນການສຶກສາຕໍ່ຜູ້ທຸກຍາກດ້ອຍໂອກາດ, ລົງທຶນໃສ່ການຮຽນສູງ ເມື່ອຮຽນຈົບມາບໍ່ສາມາດບໍ່ສາມາດຄືນທຶນໄດ້, ຄ່າຄອງຊີບສູງ ແລະ ການໃຊ້ຈ່າຍຫຼາຍໃນສັງຄົມ ແລະເສດຖະກິດບໍ່ໝັ້ນທ່ຽງມີອັດຕາເງິນເຟີ້ສູງ. ຜົນຈາກການສຳພາດ 13 ຄົນໄດ້ໃຫ້ຄຳເຫັນຢັ້ງຢືນວ່າ "ຍ້ອນຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ສະພາບຄ່າຄອງຊີບເພີ່ມຂຶ້ນ ແລະ ການແພ່ລະບາດພະຍາດໂຄວິດ". ຍ້ອນສະພາບເສດຖະກິດ, ການຄົ້ນຄວ້ານີ້ໄດ້ສອດຄ່ອງກັບຜົນການຄົ້ນຄວ້າເປັນຕົ້ນ: ນັກຮຽນພິຈາລະນາຄ່າໃຊ້ຈ່າຍໃນຂະນະທີ່ເລືອກມະຫາ ວິທະຍາໄລ ແລະ ເຂົາເຈົ້າຍັງພິຈາລະນາວ່າຈະໃຊ້ເງິນຫຼາຍປານ ໃດໃນການສຶກສາຂອງເຂົາເຈົ້າກ່ອນຕັດສິນໃຈເຂົ້າຮຽນໃນມະ ຫາວິທະຍາໄລ (Mishra & Gupta, 2021). ພ້ອມດຽວກັນນີ້, ການຂຶ້ນຄ່າຮຽນແມ່ນມີຜົນກະທົບຕໍ່ ນັກຮຽນທີ່ມີພື້ນຖານມາຈາກຄອບຄົວທີ່ມີລາຍຕໍ່າ ນັກຮຽນມີທ່າອຽງໄປຮຽນໃນສະຖາບັນການສຶກສາໃນລັດອື່ນແທນເນື່ອງຈາກຄ່າຮຽນຖືກກວ່າ (Hemelt & Marcotte, 2016).

ສາເຫດທີ່ກ່ຽວກັບຄອບຄົວ ໄດ້ສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼຸດລົງ ສະເລ່ຍໃນລະດັບປານກາງ; ແຕ່ໃນນັ້ນ, ເຫັນວ່າ ຄອບຄົວທຸກຍາກບໍ່ສາມາດສົ່ງລູກຮຽນ ແລະ ຄອບຄົວມີລາຍຮັບຄອບຄົວຕໍ່າອາຊີບບໍ່ໝັ້ນຄົງຢູ່ໃນລະດັບຫຼາຍ. ນອກຈາກນັ້ນ, ພໍ່ແມ່ ເຫັນຄວາມສຳຄັນຕໍ່ການສຶກສາຂອງລູກມີໜ້ອຍ ແລະ ຢາກໃຫ້ລູກລ້ຽງພໍ່ແມ່ຢູ່ບ້ານເພາະບໍ່ມີໃຜ, ຄອບຄົວມີທຸລະກິດໝັ້ນຄົງຈຶ່ງບໍ່ສົ່ງລູກໄປຮຽນ, ການສົ່ງລູກຮຽນຂຶ້ນກັບການຕັດສິນໃຈຂອງພໍ່ແມ່ ແລະ ຫຍຸ້ງຍາກ ເນື່ອງຈາກຄອບຄົວມີລູກຫຼາຍຄົນ. ຜົນຈາກການສຳພາດ 13 ຄົນໄດ້ໃຫ້ຄຳເຫັນຢັ້ງຢືນຕື່ມວ່າ"ຍ້ອນຄວາມຫຍຸ້ງຍາກທາງດ້ານເສດຖະກິດຄອບຄົວ ແລະ ສະພາບຄ່າຄອງຊີບເພີ່ມຂຶ້ນສູງ" ແລະ ຜູ້ສຳພາດ 11 ຄົນ ໄດ້ອະທິບາຍວ່າ "ພໍ່-ແມ່ ຕ້ອງການສົ່ງລູກໄປຮຽນຢູ່ຕ່າງປະເທດ ເປັນຕົ້ນ ສສ.ຫວຽດນາມ ແລະ ສປ.ຈີນ ເຊິ່ງໄປໃນນາມໃຊ້ທຶນສ່ວນຕົວ, ທຶນບັນດາແຂວງມີຊາຍແດນຕິດກັນ ແລະ ບັນດາແຂວງແຮກສ່ຽວ" ຜົນການຄົ້ນຄວ້າດັ່ງກ່າວຄ້າຍຄືກັບຜົນການຄົ້ນຄວ້າໂດຍ Pearson (2019) ພົບວ່າ ພໍ່ແມ່ນັກຮຽນຈຳນວນໜຶ່ງແມ່ນໄດ້ເລືອກໂຮງຮຽນເອກະຊົນສຳລັບການສຶກສາຂອງລູກ ເພາະວ່າເຂົາເຈົ້າບໍ່ພໍໃຈກັບຫຼັກສູດທີ່ໃຊ້ສອນໃນສະຖາບັນການສຶກສາຂອງລັດ. ກົງກັນຂ້າມ, ຜົນການຄົ້ນຄວ້າໂດຍ Sadima (2004) ພົບວ່າ ຍ້ອນລະດັບການສຶກສາຂອງພໍ່ແມ່ແມ່ນໄດ້ສົ່ງຜົນຕໍ່ນັກຮຽນມາລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລ ເພາະວ່າພໍ່ແມ່ບໍ່ເຫັນຄວາມສຳຄັນຂອງການສຶກສາ. ຍ້ອນແນວນັ້ນ ເຂົາເຈົ້າຈຶ່ງບໍ່ໄດ້ສົ່ງລູກເຂົ້າຮຽນໃນມະຫາວິທະຍາໄລ. ດັ່ງນັ້ນ, ການສົ່ງລູກຮຽນຂຶ້ນກັບການຕັດສິນໃຈຂອງພໍ່ແມ່ ແລະ ຄວາມພ້ອມຂອງເສດຖະກິດຄອບຄົວ.

ສາເຫດທີ່ກ່ຽວກັບການເລືອກຮຽນໃນວິຊາຊີບ ໄດ້ສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼຸດລົງຢູ່ໃນລະດັບປານກາງ. ໃນນັ້ນເຫັນວ່າ ການຮຽນວິຊາຊີບມີຄຸນນະພາບສູງກວ່າມະຫາວິທະຍາໄລ, ໂຮງຮຽນວິຊາຊີບແມ່ນບຸລິມະສິດສົ່ງເສີມຂອງລັດຖະບານຮຽນວິຊາຊີບສອດຄ່ອງກັບຄວາມຕ້ອງການຕະຫຼາດແຮງງານສາມາດຊອກເຮັດວຽກໄດ້ງ່າຍ, ຮຽນວິຊາຊີບຍ້ອນໄດ້ຮັບໂກຕ້າມາຮຽນໃນແຜນ, ຮຽນວິຊາຊີບມີຄ່າຮຽນ ແລະ ຄ່າໃຊ້ຈ່າຍຕ່າງໆໃນໄລຍະຮຽນວິຊາຊີບຕໍ່າກວ່າ. ຈາກຜົນການສຳພາດນຳ 12 ຄົນໄດ້ສອດຄ່ອງກັບຜົນຂ້າງເທິ່ງເຊັ່ນ "ນັກຮຽນມີຫຼາຍທາງເລືອກເຂົ້າຮຽນເນື່ອງຈາກມີໂຮງຮຽນ, ວິທະຍາໄລ ແລະ ສະຖາບັນການສຶກສາ ເພີ່ມຂຶ້ນຢູ່ພາຍໃນແຂວງ

ແລະ ພາກລັດມີນະໂຍບາຍສົ່ງເສີມໃຫ້ຮຽນວິຊາຊີບ" ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Mishra ແລະ Gupta (2021) ພົບວ່າ ນັກຮຽນພິຈາລະນາຄ່າໃຊ້ຈ່າຍໃນຂະນະທີ່ເລືອກມະຫາວິທະຍາໄລ ແລະ ເຂົາເຈົ້າຍັງພິຈາລະນາວ່າຈະໃຊ້ເງິນຫຼາຍປານໃດໃນການສຶກສາຂອງເຂົາເຈົ້າກ່ອນຕັດສິນໃຈເຂົ້າຮຽນໃນມະຫາ ວິທະຍາໄລ. ຄ່າໃຊ້ຈ່າຍລວມມີ: ຄ່າລົງທະບຽນຮຽນ, ຄ່າທີ່ພັກ, ຄ່າເດີນທາງ. ຊຶ່ງຄ່າດັ່ງກ່າວ ໄດ້ສົ່ງຜົນຕໍ່ການເລືອກ ແລະ ຕັດສິນໃຈເຂົ້າຮຽນໃນມະຫາວິທະຍາໄລ. ການຄົ້ນຄວ້າທີ່ຄ້າຍຄືກັນໂດຍ Hemelt ແລະ Marcotte (2016) ໄດ້ຄົ້ນຄວ້າກ່ຽວກັບຜົນກະທົບຂອງຄ່າຮຽນຕໍ່ການເລືອກເຂົ້າຮຽນມະຫາວິທະຍາໄລໃນອາເມລິກາ ໂດຍທົ່ວໄປແລ້ວການເພີ່ມຄ່າຮຽນໃນມະຫາວິທະຍາ ໄລ ເຮັດໃຫ້ນັກຮຽນມັດທະຍົມມີທ່າອຽງໄປຮຽນໃນສະຖາບັນການສຶກສາໃນລັດອື່ນແທນເນື່ອງຈາກຄ່າຮຽນຖືກກວ່າ.ການຂຶ້ນຄ່າຮຽນແມ່ນມີຜົນກະທົບຕໍ່ນັກຮຽນທີ່ມີພື້ນຖານມາຈາກຄອບຄົວທີ່ມີລາຍຕໍ່າ. ດັ່ງນັ້ນ, ນັກຮຽນເລືອກຮຽນໃນມະຫາວິທະຍາໄລ ຫຼື ສະຖາບັນໃດໜຶ່ງ ຈະຕ້ອງໄດ້ພິຈາລະນາຄ່າຮຽນ, ຄ່າພັກເຊົາ, ຄ່າເດີນທາງ ແລະ ສາຂາວິຊາວິຊາສະເພາະທີ່ສອດຄ່ອງກັບຄວາມຕ້ອງການຕະຫຼາດແຮງງານ.

ສາເຫດທີ່ກ່ຽວກັບຕົວນັກຮຽນສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼວງພຣະບາງ... 

ສາເຫດທີ່ກ່ຽວກັບຕົວນັກຮຽນສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມສ ຫຼວງພຣະບາງໃນລະດັບປານກາງ; ແຕ່ໃນນັ້ນ, ມີສາເຫດຮຽນຈົບມາແລ້ວ ແຕ່ບໍ່ມີບ່ອນຮອງຮັບເຮັດວຽກນຳພາກສ່ວນຕ່າງໆ ແລະ ນັກຮຽນໄປປະກອບອາຊີບ ຫຼື ເຮັດທຸລະກິດອື່ນໆຢູ່ໃນລະດັບຫຼາຍ. ສ່ວນສາເຫດບໍ່ມີສິ່ງຈູງໃຈໃນການຮຽນຕໍ່ໃນມະຫາວິທະຍາໄລ, ເລືອກເຂົ້າຮຽນບ່ອນອື່ນຕາມຂະບວນການຊັກຊວນຈາກໝູ່ເພື່ອນຍັງບໍ່ທັນມີເປົ້າໝາຍຈະປະກອບອາຊີບໃດ ເມື່ອຮຽນຈົບມະຫາວິທະຍາໄລມາ, ຄວາມຮັບຮູ້ຂອງຜູ້ຈະສຶກສາໃນມະຫາວິທະຍາໄລຍັງບໍ່ທັນເຂົ້າໃຈສູງ ແລະ ຢ້ານຮຽນບໍ່ລອດ ຢູ່ໃນລະດັບປານກາງ. ດັ່ງຜົນຄົ້ນຄວ້າໂດຍ Pearson (2019), Odia (2014), Daily, Farewell ແລະ Kumar (2010) ໄດ້ແນະນຳວ່າການໄດ້ຮັບວຽກເຮັດງານທຳຫຼັງຈົບປະລິນຍາຕີເປັນປັດໃຈທີ່ສຳຄັນສຳລັບນັກ ຮຽນໃນການເລືອກເຂົ້າຮຽນ ແລະ ສະຖາບັນທີ່ມີຊື່ສຽງ, ມີຄຸນນະພາບດີ ແລະ ເປັນທີ່ຍອມຮັບໃນສັງຄົມ ແມ່ນສິ່ງຈູງໃຈໃນການຮຽນຕໍ່ (Mishra & Gupta, 2021). ນອກຈາກນັ້ນ, Spearman, Rahim, Ghanayem ແລະ Ljepava (2016) ໄດ້ພົບວ່າ ການໃຫ້ຄຳແນະນຳຈາກ ໝູ່ເພື່ອນ ແລະ ພໍ່ແມ່ ແມ່ນຜົນຕໍ່ການລົງທະບຽນເຂົ້າຮຽນມະຫາວິທະຍາໄລ. ອີງຕາມຜົນການສຳຫຼວດດັ່ງກ່າວພົບວ່າ ນັກສຶກສາລະດັບປະລິນຍາຕີ ແລະ ນັກ ສຶກສາປະລິຍາໂທ ກວມ 40% ໄດ້ຮຽນຮູ້ກ່ຽວກັບມະຫາວິທະຍາ ໄລ ຂອງເຂົາເຈົ້າໂດຍຜ່ານການແນະນຳຈາກໝູ່ເພື່ອນ ແລະ ຄອບ ຄົວ. ອີກຢ່າງໜຶ່ງການຄົ້ນຄວ້າເຫຼົ່ານີ້ສະໜັບສະໜູນຂໍ້ສົມມຸດຖານທີ່ວ່າ ເວົ້າແບບປາກຕໍ່ປາກ ແລະ ຄຳແນະນຳຂອງໝູ່ເພື່ອນຈະມີຜົນຕໍ່ການຕັດສິນໃຈເຂົ້າຮຽນໃນມະຫາວິທະຍາໄລໃດໜຶ່ງ. ດັ່ງນັ້ນ, ບ່ອນຮອງຮັບເຮັດວຽກພາຍຫຼັງຮຽນຈົບ ແລະ ຊື່ສຽງຂອງສະຖາບັນເປັນສິ່ງຈູງໃຈໃນການຮຽນຂອງນັກຮຽນຫຼາຍຂຶ້ນ.

ຈາກຜົນການຄົ້ນຄວ້ານີ້ ພົບວ່າ 4 ສາເຫດ ມີຄວາມສຳພັນກັບນັກຮຽນມາສອບເສັງ ຢູ່ ມສ ຫຼວງພຣະບາງ ເປັນຕົ້ນ: ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ສາເຫດທີ່ກ່ຽວກັບເສດຖະກິດ, ສາເຫດທີ່ກ່ຽວກັບການເລືອກຮຽນໃນວິຊາຊີບ ແລະ ສາເຫດທີ່ກ່ຽວກັບຕົວນັກຮຽນ ໄດ້ສົ່ງຜົນຕໍ່ນັກຮຽນມາສອບເສັງເຂົ້າຮຽນຢູ່ ມສ ຫຼວງພຣະບາງດ້ວຍ. ແລະ 5 ສາເຫດ ມີຄວາມສຳພັນກັບນັກຮຽນລົງທະບຽນເຂົ້າຮຽນຢູ່ ມສ ຫຼວງພຣະບາງ ເຊັ່ນ: ສາເຫດທີ່ກ່ຽວກັບສັງຄົມ, ສາເຫດທີ່ກ່ຽວກັບຄອບຄົວ, ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ສາເຫດທີ່ກ່ຽວກັບຕົວນັກຮຽນ ແລະ ສາເຫດທີ່ກ່ຽວກັບເສດຖະກິດທີ່ເພີ່ມຂຶ້ນ ສົ່ງຜົນຕໍ່ນັກຮຽນມາລົງທະບຽນເຂົ້າຮຽນຢູ່ ມສ ຫຼວງພຣະບາງດ້ວຍ. ຜົນການຄົ້ນຄວ້າຄັ້ງນີ້ ມີບາງສາເຫດ ຄ້າຍຄືກັບການຄົ້ນຄວ້າ ໂດຍ Krotova ແລະ Krotov (2018) ໄດ້ລະບຸວ່າ ມີບາງສາເຫດ ຍ້ອນການແຂ່ງຂັນກັນສູງຂອງບັນດາສະຖາບັນການສຶກສາ ທັງພາຍໃນ ແລະ ຕ່າງປະເທດ, ມີຜົນກະທົບຈາກວິກິດທາງດ້ານເສດຖະກິດຂອງປະເທດ, ມີລະດັບຄວາມນິຍົມຮຽນໃນປະເທດຫຼວງພຣະບາງ ແລະ ສາເຫດອື່ນໆມີຄວາມສຳພັນສົ່ງຜົນຕໍ່ການລົງທະບຽນເຂົ້າຮຽນຫຼວງພຣະບາງ. ພ້ອມດຽວກັນນັ້ນ, ນັກຮຽນບໍ່ມາລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລ ຍ້ອນສະພາບການປ່ຽນທາງດ້ານເສດຖະກິດ-ສັງຄົມ, ມີນັກຮຽນໄດ້ຕັດສິນໃຈເລືອກເຂົ້າຮຽນດ້ວຍຕົນເອງ ເປັນສ່ວນໃຫຍ່ ເປັນຕົ້ນເຂົ້າຫຼັກສູດສາຍສັງຄົມ, ໃນນີ້ ໂອກາດການເຂົ້າເຮັດວຽກງານຫຼັງຮຽນຈົບ, ເພດ ແລະ ປັດໃຈສິ່ງແວດລ້ອມອ້ອມຍັງມີຄວາມສຳພັນຕໍ່ຜົນການເຂົ້າຮຽນໃນມະຫາວິທະຍາໄລ (Odia, 2014). ນອກຈາກນັ້ນ, ສະພາບແວດລ້ອມຂອງສັງຄົມ, ຮີດຄອງປະເພນີ ແລະ ການໃຫ້ຄຸນຄ່າການສຶກສາຍັງເປັນຂໍ້ຈຳກັດຄວາມສາມາດຂອງເດັກຍິງໃນການເຂົ້າໂຮງຮຽນ ຫຼື ສຶກສາ

ຕໍ່ໃນສະຖາບັນການສຶກສາຊັ້ນສູງ, ການຄົ້ນຄວ້າໂດຍ Sadima (2004) ໄດ້ລະບຸວ່າ ການໃຫ້ຄວາມສຳຄັນຂອງການສຶກສາຈາກພໍ່ແມ່ຄອບຄົວມີອິດທິພົນໃຫ້ລູກຫຼານຕົນໄປລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລ ຫຼື ໂຮງຮຽນໃດທີ່ເໝາະສົມ ເນື່ອງຈາກວ່າ ມີນັກຮຽນມັດທະຍົມປາຍຫຼາຍຄົນ ຫຼື ນັກສຶກສາທີ່ຮຽນຈົບມາ ຍັງມີອັດຕາຫວ່າງງານຫຼາຍ ແລະ ບໍ່ສາມາດຊອກວຽກເຮັດງານທຳໄດ້. ດັ່ງນັ້ນ, ມສ ຄວນໄດ້ປັບປຸງຄຸນນະພາບການສຶກສາຂອງຕົນ ແລະ ຄົ້ນຄວ້າວິທີການຮັບມືຕໍ່ບັນດາສາເຫດກ່ຽວກັບເສດຖະກິດການເງິນ, ດ້ານສັງຄົມມີໄພຫວ່າງງານສູງ, ຄວາມຫຍຸ້ງຍາກເສດຖະກິດຄອບຄົວ ແລະ ສ້າງແຮງຈູງໃຈຂອງນັກຮຽນມາເຂົ້າຮຽນຢູ່ ມສ.

## 5. ສະຫຼຸບ

ການຄົ້ນຄວ້າ ຄັ້ງນີ້ ພົບວ່າ ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມສ ຫຼວງນ້ຳທາ ຢູ່ໃນລະດັບປານກາງ. ສາເຫດທີ່ກ່ຽວກັບສັງຄົມ ສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມະຫາວິທະຍາໄລສຸພານຸວົງ ຫຼວງນ້ຳທາ ໃນລະ ດັບຫຼາຍ ແລະ ສາເຫດທີ່ກ່ຽວກັບເສດຖະກິດສົ່ງຜົນຕໍ່ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນຢູ່ ມະຫາວິທະຍາໄລສຸພານຸວົງ ຫຼວງນ້ຳທາ ຢູ່ໃນລະດັບຫຼາຍ. ມີ 4 ສາເຫດມີຄວາມສຳພັນກັບນັກຮຽນມາສອບເສັງ ຢູ່ ມສ ຫຼວງນ້ຳທາ ຄື: ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ເສດຖະກິດ, ການເລືອກຮຽນໃນວິຊາຊີບ ແລະ ຕົວນັກຮຽນ ໄດ້ສົ່ງຜົນຕໍ່ນັກຮຽນມາສອບເສັງຢູ່ມະຫາວິ ທະຍາໄລ ສຸພານຸວົງ ຫຼວງນ້ຳທາ. ໃນນັ້ນ, ມີ 5 ສາເຫດ ມີຄວາມສຳພັນກັບນັກຮຽນມາລົງທະບຽນເຂົ້າຮຽນຢູ່ ມສ ຫຼວງນ້ຳທາ ຄື: ສາ ເຫດທີ່ກ່ຽວກັບສັງຄົມ, ຄອບຄົວ, ມະຫາວິທະຍາໄລ, ຕົວນັກ ຮຽນ ແລະ ເສດຖະກິດທີ່ ສົ່ງຜົນຕໍ່ນັກຮຽນມາລົງທະບຽນເຂົ້າຮຽນຢູ່ ມສ ຫຼວງນ້ຳທາ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດແລະບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງ ຜູ້ໃຫ້ທຶນສະໜັບສະໜູນໃນການຄົ້ນຄວ້າຄັ້ງນີ້ ນັ້ນກໍ່ຄື ADB Grant No. 0500-Lao (SF): Second Strength Higher Education Project (SSHEP) Competitive Research Fund (CRF).

## 8. ເອກະສານອ້າງອີງ

ມະຫາວິທະຍາໄລ ສຸພານຸວົງ. (2021). ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາປະຈຳປີ ສົກສຶກສາ 2019-2020 ແລະ ທິດທາງແຜນພັດທະນາປະຈຳສົກສຶກສາ 2020-2021 .

Hayes, A. (2021). Simple random sample. Retrieved from https://www.investopedia.com/terms/s/simple-random-sample.asp

Bhati, A., Lee, D., & Kairon, H. S. (2014). Underlining factors in deciding to pursue Australian higher education in Singapore: An international students' perspective. Procedia-Social and Behavioral Sciences, 116, 1064-1067.

Cresswell, J. W. (2012). Planning, conducting, and evaluating quantitative and qualitative research. Educational Research. https://doi.org/10.4135/9781483349435, (10).

Daily, C. M., Farewell, S., & Kumar, G. (2010). Factors influencing the university selection of international students. Academy of Educational Leadership Journal, 14(3), 59.

Frankel, J. R., & Wallen, N. E. (2009). How to design and evaluate research in education. McGraw-Hill.

Hemelt, S. W., & Marcotte, D. E. (2016). The changing landscape of tuition and enrollment in American public higher education. RSF: The Russell Sage Foundation Journal of the Social Sciences, 2(1), 42-68.

Krotova, P. C., & Krotov, V. (2018). A college at the crossroads: The case of the college of business administration at Abu Dhabi University. Journal of Cases in Educational Leadership, 21(4), 52-66.

Mishra, N., & Gupta, S. L. (2021). Factors and Influences Contributing to the College/University Selection: A Study of Private Higher Education Institutes (HEIs) in Oman. TEM Journal, 10(2), 908-915.

Odia, A. A. (2014). A study of factors influencing students' enrolment in social studies education at the post-Secondary school level in

Nigeria. Asian Journal of Management Sciences & Education, 3(2), 116-124.

Pearson, C. (2019). Factors affecting the decrease of enrollment in schools. Retrieved from https://www.theclassroom.com/factors-affecting-decrease-enrollment-schools-8241566.html

Sadiman, A. S. (2004, November). Challenges in education in Southeast Asia. In international seminar on 'Towards Cross Border Cooperation between South and Southeast Asia: The importance of India's North East playing bridge and buffer role', Kaziranga, India (pp. 16-19).

Spearman, J. J., Rahim, M. M. A., Ghanayem, S. W., & Ljepava, N. (2016, May). Factors influencing student enrolment and choice of university. In 35th International Business Research Conference 30-31 May 2016.

Turner, R. C., & Carlson, L. (2003). Indexes of item-objective congruence for multidimensional items. International journal of testing, 3(2), 163-171.

UNESCO. (2016). Incheon declaration and framework for action for the implementation of sustainable development goal 4. Towards inclusive and equitable quality education and lifelong learning opportunities for all. Retrieved from: https://iite.unesco.org/publications/education-2030-incheon-declaration-framework-action-towards-inclusive-equitable-quality-education-lifelong-learning/